<u>ນະຄອນຫຼວງວຽງຈັນ</u>

**ສະຫາຍ ທອງລຸນ ສີສຸລິດ,**

**ເລຂາທິການໃຫຍ່ ຄະນະບໍລິຫານງານ ສູນກາງພັກປະຊາຊົນປະຕິວັດລາວ**

**ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ**

ຂ້າພະເຈົ້າ ຂໍສະແດງຄວາມຂອບອົກຂອບໃຈ ອັນເລິກເຊິ່ງ ມາຍັງ ສະຫາຍເລຂາທິການໃຫ່ຍທີ່ໄດ້ສົ່ງຄຳຊົມເຊີຍອັນອົບອຸ່ນທີ່ເປັນກຳລັງໃຈ ເນື່ອງໃນໂອກາດ ວັນສະຖາປະນາ ສາທາລະນະລັດ ປະຊາຊົນ ປະຊາທິປະໄຕເກົາຫຼີ ຄົບຮອບ 75 ປີ.

ຂ້າພະເຈົ້າມີຄວາມປິຕິຍິນດີທີ່ເຫັນວ່າ ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີປະຫວັດສາດອັນຍາວນານ ແລະ ມູນເຊື້ອອັນດີງາມ ລະຫວ່າງ ເກົາຫຼີ ແລະ ລາວ ໄດ້ຮັບການຮັດແໜ້ນ ແລະ ເສີມຂະຫຍາຍ ຢ່າງບໍ່ຢຸດຢັ້ງ ຕາມຄວາມຮຽກຮ້ອງຕ້ອງການໃນຍຸກສະໄໝໃໝ່ ແລະຄວາມມຸ່ງມາດປາດຖະໜາຮ່ວມຂອງປະຊາຊົນສອງຊາດ ແລະ ສະແດງຄວາມເຊື່ອໝັ້ນວ່າ ການສະໜັບສະໜູນ ແລະຄວາມສາມັກຄີລະຫວ່າງ ສອງພັກ, ສອງປະເທດພວກເຮົາຈະສືບຕໍ່ໄດ້ຮັບການເພີ່ມທະວີ ໃນບົນເສັ້ນທາງດຽວເພື່ອປະຕິບັດພາລະກິດອັນຍິ່ງໃຫ່ຍຂອງສັງຄົມນິຍົມ.

ຂໍອວຍພອນໃຫ້ ສະຫາຍເລຂາທິການໃຫ່ຍ ຈົ່ງມີພະລານາໄມສົມບູນ ແລະ ປະສົບຜົນສຳເລັດທີ່ໃຫ່ຍຫຼວງກວ່າເກົ່າ ໃນໜ້າທີ່ອັນມີຄວາມຮັບຜິດຊອບຂອງສະຫາຍຈັດຕັ້ງນຳພາການຕໍ່ສູ້ຂອງພັກແລະປະຊາຊົນລາວເພື່ອກໍ່ສ້າງລັດສັງຄົມນິຍົມທີ່ມັ່ງຄັ່ງເຂັ້ມແຂງ.

**ກິມ ເຈິງ ອຸນ**

**ເລຂາທິການໃຫ່ຍ ພັກແຮງງານເກົາຫຼີ**

**ປະທານກິດຈະການແຫ່ງລັດ ແຫ່ງ**

**ສາທາລະນະລັດ ປະຊາຊົນ ປະຊາທິປະໄຕເກົາຫຼີ**

ວັນທີ 21 ກັນຍາ, ປີ ຈູດເຊ112(2023)

ນະຄອນຫຼວງພຽງຢາງ